**ມິຊຊາອາທິດທີ 4 ການົດທຳມະດາ**

**ວັນທີ 30 ມັງກອນ 2022**



**ພຣະວໍລະສານໂດຍນັກບຸນລູກາ 4, 21-30**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງຕັ້ງຕົ້ນກ່າວແກ່ພວກເຂົາວ່າ: "ເລື່ອງໃນພຣະຄຳພີຕອນທີ່ຫູຂອງພວກເຈົ້າໄດ້ຍິນນັ້ນສຳເລັດລົງແລ້ວໃນວັນນີ້ເອງ." ທຸກຄົນໄດ້ຮູ້ເຫັນເປັນພະຍານ ແລະພິດສະຫວົງງົງງຶດໃນວາຈາອັນຈັບໃຈທີ່ພຣະອົງຊົງກ່າວນັ້ນ. ພວກເຂົາເວົ້າວ່າ: "ເພິ່ນນີ້ບໍ່ແມ່ນບຸດຂອງຢໍແຊນັ້ນບໍ?" ພຣະອົງກ່າວຕອບພວກເຂົາວ່າ: "ແມ່ນແລ້ວ, ພວກເຈົ້າຈະຍົກເອົາສຸພາສິດນີ້ມາເວົ້າກັບເຮົາວ່າ: ທ່ານໝໍເອີຍ! ເຊີນປົວທ່ານເອງໃຫ້ດີເສຍກ່ອນ. ສິ່ງທີ່ເຂົາເລົ່າລືກັນວ່າທ່ານໄດ້ກະທຳຢູ່ເມືອງກາຟານາອຸມນັ້ນ, ກໍຈົ່ງກະທຳຢູ່ບ້ານເກີດເມືອງນອນຂອງທ່ານເຖີດ". ພຣະອົງກ່າວຕໍ່ໄປວ່າ: "ເຮົາບອກພວກເຈົ້າເປັນຄວາມຈິງວ່າ: "ບໍ່ມີປະກາສົກຄົນໃດໄດ້ຮັບການຕ້ອນຮັບອັນດີງາມຢູ່ບ້ານເກີດເມືອງນອນຂອງຕົນເລີຍ. ເຮົາບອກພວກເຈົ້າຢ່າງແນ່ນອນວ່າ: ໃນສະໄໝປະພາສົກເອລີເມື່ອທ້ອງຟ້າຖືກອັດໄວ້ເປັນເວລາສາມປີເຄິ່ງ ເກີດມີການອຶດຢາກຢ່າງໃຫຍ່ຫລວງທົ່ວປະເທດອິດສະລາແອນ, ພວກນາງໝ້າຍໃນປະເທດນັ້ນກໍມີຢູ່ຫລາຍຄົນ, ປານນັ້ນກໍດີປະພາສົກເອລີກໍບໍ່ໄດ້ຖືກສົ່ງໄປຫາພວກນາງໝ້າຍນັ້ນເລີຍ, ແຕ່ໄດ້ຮັບຄຳສັ່ງໄປຫານາງໝ້າຍຜູ້ໜຶ່ງຢູ່ຊາແຣັບຕາໃນປະເທດຊີດອນ. ໃນສະໄໝປະພາສົກເອລີເຊ, ກໍມີຄົນເປັນຂີ້ທູດຫລວງຫລາຍຢູ່ປະເທດອິສຣາແອນ, ແຕ່ປານນັ້ນກໍດີບໍ່ມີໃຜຈັກຄົນໄດ້ຮັບການປິ່ນປົວມີແຕ່ນາອາມັນຊາວຊີເຣຍເທົ່ານັ້ນ".

ພວກທີ່ຢູ່ໃນໂຮງທຳໄດ້ຍິນກໍເກີດມີໃຈໂມໂຫຢ່າງໃຫຍ່. ພວກເຂົາພ້ອມກັນລຸກຂຶ້ນຄຸມພຣະອົງໄປນອກເມືອງ ແລະຂຶ້ນໄປເທິງໂນນສູງບ່ອນເມືອງຂອງພວກເຂົາຕັ້ງຢູ່ໝາຍຈະຊຸກພຣະອົງລົງ, ແຕ່ພຣະອົງໄດ້ສະເດັດຜ່າພວກເຂົາອອກໄປ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າວັນອາທິດນີ້ແມ່ນສືບຕໍ່ຈາກອາທິດທີ່ຜ່ານມາ. ອາທິດແລ້ວນີ້, ພວກເຮົາເຫັນວ່າບໍ່ວ່າພຣະເຢຊູເຈົ້າຈະສະເດັດໄປບ່ອນໃດພຣະອົງກໍເຕັມພຽບດ້ວຍພຣະຈິດເຈົ້າ. ແລະບົດອ່ານທີ່ພຣະອົງອ່ານຈາກໜັງສືຂອງປະພາສົກອີຊາຍາກໍໄດ້ຢັ້ງຢືນວ່າພຣະອົງແມ່ນຜູ້ທີ່ຖືກເສກສະເຫລີມຈາກພຣະຈິດເຈົ້າ. ເພື່ອປະກາດຂ່າວດີແກ່ຄົນທຸກຈົນແລະປົດປ່ອຍຄົນຖືກຄຸມຂັງ ແລະປະກາດຄວາມຮັກຄວາມເມດຕາຂອງພຣະບິດາເຈົ້າໃຫ້ມະນຸດ. ຫລືເວົ້າອີກຢ່າງ, ພຣະເຢຊູເຈົ້າແມ່ນພຣະເມດຊີອາທີ່ມາເພື່ອໄຖ່ກູ້ມະນຸດຊາດ. ແຕ່ປັນຫາກໍຄື ຄົນໄທບ້ານຂອງພຣະເຢຊູເຈົ້າບໍ່ເຊື່ອໃນພຣະອົງ. ຍ້ອນພວກເຂົາຖືພຣະອົງເປັນພຽງແຕ່ຄົນສາມັນທຳມະດາ. ເປັນລູກຂອງຍິງສາວທຳມະດາແລະລູກຂອງຊ່າງໄມ້ຜູ້ໜຶ່ງເທົ່ານັ້ນ. ດ້ວຍເຫດນີ້, ພຣະເຢຊູເຈົ້າຈຶ່ງກ່າວກັບພວກເຂົາວ່າ: “ບໍ່ມີປະພາສົກໃດທີ່ໄດ້ຮັບການຕ້ອນຮັບດີຢູ່ບ້ານເກີດເມືອງນອນຂອງຕົນ”. ຍ້ອນໄທບ້ານຂອງພຣະເຢຊູເຈົ້າບໍ່ຕ້ອນຮັບພຣະອົງ, ພຣະອົງຈຶ່ງຈຳຕ້ອງສະເດັດໄປບ້ານອື່ນເພື່ອປະກາດຂ່າວດີຂອງພຣະບິດາເຈົ້າໃຫ້ພວກເຂົາຮູ້ຈັກ. ສິ່ງນີ້ສະທ້ອນໃຫ້ເຫັນວ່າ, ຄົນທີ່ຮູ້ຈັກພຣະເຢຊູເຈົ້າແລະເຄີຍຢູ່ກິນນຳພຣະອົງ ເຂົາບໍ່ເຊື່ອໃນພຣະອົງ. ສ່ວນຄົນຕ່າງສາດສະໜາທີ່ບໍ່ຮູ້ຮັກພຣະເຢຊູເຈົ້າ ເຂົາພັດເຊື່ອໃນຄຳເທດສອນຂອງພຣະອົງ. ໝາຍວ່າຜູ້ທີ່ຕ້ອນຮັບຂ່າວດີແລະກັບຈິດປ່ຽນໃຈກ່ອນໝູ່ໝົດນັ້ນແມ່ນຄົນຕ່າງສາດສະໜາ. ເພາະການທີ່ພຣະເຢຊູເຈົ້າມາໃນໂລກນີ້ແມ່ນເພື່ອຊ່ວຍທຸກຄົນໃຫ້ຮອດບໍ່ວ່າຈະເປັນຄົນຢິວກໍຄືຄົນຕ່າງສາດສະໜາ.

ສ່ວນພວກເຮົາຜູ້ທີ່ຮູ້ຈັກພຣະເຢຊູເຈົ້າຜ່ານທາງວາຈາຂອງພຣະອົງ, ພວກເຮົາໄດ້ເຊື່ອໃນພຣະອົງບໍ? ຫລືພວກເຮົາເປັນເໝືອນໄທບ້ານນາຊາແລັດທີ່ຖືວ່າພຣະອົງເປັນພຽງແຕ່ຄົນທຳມະດາ, ລູກຂອງຊ່າງໄມ້ບໍ່ມີສີ່ສຽງຜູ້ໜຶ່ງເທົ່ານັ້ນ. ດ້ວຍເຫດນີ້, ວາຈາຂອງພຣະອົງກໍບໍ່ມີນ້ຳໜັກແລະຄວາມສຳຄັນຫຍັງສຳລັບພວກເຮົາ. ເພາະສະນັ້ນພວກເຮົາຈຶ່ງຖືເບົາໃນການຟັງວາຈາຂອງພຣະອົງແລະນຳມາປະຕິບັດໃນຊີວິດຂອງພວກເຮົາ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດເປີດຕາ, ເປີດຫູແລະເປີດໃຈຂອງລູກ ເພື່ອລູກຈະໄດ້ເຫັນແລະເຊື່ອໃນພຣະອົງ, ເພື່ອລູກຈະໄດ້ຟັງວາຈາຊົງຊີວິດຂອງພຣະອົງ. ເພາະພຣະອົງແມ່ນພຣະວາຈານາດຂອງພຣະເຈົ້າ, ພຣະເມດຊີອາຜູ້ທີ່ມາໄຖ່ກູ້ລູກໃຫ້ຮອດພົ້ນຈາກບາບແລະຈາກຄວາມຕາຍນັ້ນແລ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ